**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ
ພະແນກ ເຕັກໂນໂລຊີ ແລະ ການສື່ສານ ເລກທີ 317 /ພຕສ
ອຸດົມໄຊ, ວັນທີ 15 ກໍລະກົດ 2025

# ແຈ້ງການ

**ເຖິງ:** ພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ-ນັກສຶກສາ ແລະ ພໍ່ແມ່ປະຊາຊົນ ໃນຂອບເຂດທົ່ວແຂວງອຸດົມໄຊ.

**ເລື່ອງ:** ເພີ່ມທະວີມີສະຕິລະວັງຕົວ ຕໍ່ການຕົວະຍົວະຫຼອກລວງ ຜ່ານທາງໂທລະຄົມມະນາຄົມ ແລະ ອິນເຕີເນັດ.

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ແລະສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015;
- ອີງຕາມ ຂໍ້ຕົກລົງວ່າດວ້ຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ, ສະບັບເລກທີ 776/ອຊ, ລົງວັນທີ 15 ສິງຫາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາສື່ສັງຄົມອອນລາຍຢູ່ແຂວງອຸດົມໄຊ, ສະບັບເລກທີ 1009/ອຊ, ລົງວັນທີ 31 ສິງຫາ 2023.

ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຂໍແຈ້ງມາຍັງບັນດາທ່ານຊາບວ່າ: ປັດຈຸບັນມີພວກມິດສາຊີບແອບອ້າງວ່າຕົນເອງເປັນພະນັກງານຈາກບໍລິສັດ, ອົງກອນ ຫຼືໜ່ວຍງານທີ່ໜ້າເຊື່ອຖື ເພື່ອຫຼອກລວງໃຫ້ເຫຍື່ອຫຼົງເຊື່ອ ແລະ ມອບຂໍ້ມູນສຳຄັນໃຫ້ພວກເຂົາ. ຈຸດປະສົງຫຼັກຂອງພວກມິດສາຊີບຄື "ເງິນ" ພວກເຂົາອາດຈະບໍ່ໄດ້ຂໍເງິນຈາກທ່ານໂດຍກົງໃນທັນທີ ແຕ່ຈະຫຼອກເອົາຂໍ້ມູນສ່ວນຕົວ, ຂໍ້ມູນທາງການເງິນ, ຂໍ້ມູນການເຂົ້າສູ່ລະບົບທຸລະກຳທາງການເງິນອອນລາຍຕ່າງໆ ແລ້ວນຳຂໍ້ມູນດັ່ງກ່າວເຂົ້າລະບົບ ເພື່ອລັກໂອນເງິນອອກຈາກບັນຊີຂອງທ່ານໄປໃສ່ບັນຊີຂອງພວກເຂົາ ຫຼື ນຳໃຊ້ຂໍ້ມູນສ່ວນຕົວຂອງທ່ານໄປຕົວະຍົວະຫຼອກລວງຍາດພີ່ນ້ອງ ຫຼື ຄົນໃກ້ຊິດຂອງທ່ານໂອນເງິນໃຫ້ພວກເຂົາ ແລະ ວິທີການອື່ນໆ. ເພື່ອປ້ອງກັນບັນຫາດັ່ງກ່າວ ຖ້າຫາກທ່ານພົບເຫັນພຶດຕິກຳທີ່ກ່າວມາຂ້າງເທິງນີ້ ແນະນຳໃຫ້ທ່ານປະຕິບັດຕາມວິທີການຕໍ່ໄປນີ້:

1. **ຕັ້ງສະຕິ ແລະ ສົງໄສໄວ້ກ່ອນ (Be Skeptical):** ຖ້າມີຄົນໂທມາ ຫຼື ສົ່ງຂໍ້ຄວາມມາ ໂດຍທີ່ເຮົາບໍ່ຮູ້ແຫຼ່ງທີ່ມາ ໂດຍສະເພາະເລື່ອງທີ່ກ່ຽວກັບເງິນຄຳ, ລາງວັນ, ຜົນປະໂຫຍດທາງດ້ານເສດຖະກິດ ຫຼື ບັນຫາຕ່າງໆ ໃຫ້ສົງໄສໄວ້ກ່ອນວ່າອາດເປັນມິດສາຊີບ ຫຼື ເປັນການຫຼອກລວງ;
2. **ຢ່າໃຫ້ຂໍ້ມູນສ່ວນຕົວເດັດຂາດ:**
   - ລະຫັດຜ່ານຄັ້ງດຽວ (OTP - One-Time Password) ເປັນຄືກະແຈຕູ້ນິລະໄພ ຢ່າໃຫ້ຜູ້ອື່ນທີ່ບໍ່ກ່ຽວຂ້ອງເດັດຂາດ, ຖ້າເປັນທະນາຄານ ແລະ ບໍລິສັດຈິງ ຈະບໍ່ຂໍລະຫັດນີ້ຈາກທ່ານ ຜ່ານທາງໂທລະສັບ ຫຼື ຂໍ້ຄວາມ.
   - ຢ່າບອກລະຫັດຜ່ານ (Password), ເລກບັນຊີ, ເລກບັດປະຈຳຕົວ ຫຼື ໜັງສືຜ່ານແດນ, ເລກທ້າຍບັດເຄຣດິດ (CVV) ໃຫ້ຜູ້ອື່ນທີ່ບໍ່ກ່ຽວຂ້ອງເດັດຂາດ.

3. **ກວດສອບຂໍ້ມູນກັບແຫຼ່ງທີ່ໜ້າເຊື່ອຖືກ່ອນ:** ຖ້າມີຄົນໂທມາອ້າງວ່າ ເປັນພະນັກງານທະນາຄານ ຫຼື ເປັນພະນັກງານບໍລິສັດໃດໜຶ່ງ ທີ່ຟັງແລ້ວມີລັກສະນະທີ່ບໍ່ໜ້າເຊື່ອຖື ໃຫ້ວາງສາຍກ່ອນ ແລ້ວຊອກຫາເບີໂທຂອງທະນາຄານ ຫຼື ເບີບໍລິສັດນັ້ນ ຈາກເວັບໄຊທາງການ ຫຼື ຈາກຫຼັງບັດ ATM ຂອງທ່ານ ແລ້ວໂທໄປສອບຖາມທະນາຄານ ຫຼື ບໍລິສັດ ທີ່ມີຕົວຕົນເທົ່ານັ້ນ **ຫ້າມໂທກັບເບີທີ່ເຂົາເຈົ້າໂທມາເດັດຂາດ**;
4. **ບໍ່ກົດລິ້ງແປກປອມ, ບໍ່ດາວໂຫຼດຟາຍ:** ຢ່າກົດລິ້ງ ຫຼື ດາວໂຫຼດຟາຍ ທີ່ສົ່ງມາທາງຂໍ້ຄວາມ (SMS, Messenger) ຫຼື ອີເມວ ທີ່ບໍ່ໜ້າເຊື່ອຖື;
5. **ສັງເກດຄວາມຜິດປົກກະຕິ:**
   - **ເບີໂທ:** ມັກຈະເປັນເບີມືຖືທຳມະດາ, ບໍ່ແມ່ນເບີຂອງສຳນັກງານ, ອົງກອນ ຫຼື ບໍລິສັດ.
   - **ເວັບໄຊ ຫຼື ອີເມວ:** ເວັບໄຊ ຫຼື ຊື່ອີເມວຜູ້ສົ່ງມັກຈະສະກົດຜິດ ຫຼື ເປັນຊື່ແປກໆ ເຊັ່ນ: bcel-cc.com, bcel-support@gmail.com ແທນທີ່ຈະເປັນ bcel.com.la, ...@bcel.com.la;
   - **ພາສາ:** ການໃຊ້ພາສາມັກຈະຜິດຫຼັກໄວຍາກອນ ຫຼື ເປັນຄຳສັບທີ່ບໍ່ເປັນທາງການ.
6. **ຕັ້ງລະຫັດຜ່ານທີ່ປອດໄພ ແລະ ເປີດໃຊ້ການຢືນຢັນຕົວຕົນສອງຊັ້ນ (2FA):**
   - ຕັ້ງລະຫັດຜ່ານໃຫ້ແຕກຕ່າງກັນໃນແຕ່ລະບໍລິການ ແລະ ໃຫ້ຍາກຕໍ່ການຄາດເດົາ;
   - ເປີດໃຊ້ການຢືນຢັນຕົວຕົນສອງຊັ້ນ (2FA) ໃນທຸກບັນຊີທີ່ສຳຄັນ ເຊັ່ນ: Facebook, Google, Apple ID, TikTok, ແອັບທະນາຄານ ແລະ ອື່ນໆ ເພື່ອເປັນການປ້ອງກັນບັນຊີດັ່ງກ່າວໃຫ້ມີຄວາມປອດໄພຂຶ້ນຕື່ມອີກຂັ້ນ.
7. **ຖ້າຫາກຕົກເປັນເຫຍື່ອແລ້ວຄວນປະຕິບັດດັ່ງນີ້:**
   - **ຕິດຕໍ່ທະນາຄານທັນທີ:** ແຈ້ງອາຍັດບັດ ຫຼື ບັນຊີເພື່ອຢຸດທຸລະກຳ;
   - **ປ່ຽນລະຫັດຜ່ານ:** ປ່ຽນລະຫັດຜ່ານຂອງທຸກບັນຊີທີ່ສຳຄັນໂດຍດ່ວນ;
   - **ຮວບຮວມຫຼັກຖານ:** ເກັບຂໍ້ຄວາມ, ເບີໂທ ຫຼື ຂໍ້ມູນການໂອນເງິນໄວ້;
   - **ແຈ້ງຄວາມ:** ແຈ້ງເຈົ້າໜ້າທີ່ຕຳຫຼວດ ເພື່ອດຳເນີນຄະດີ;
   - ຫຼື ແຈ້ງເຫດສຸກເສີນທາງຄອມພິວເຕີ ຫາພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ: https://csirtodx.gov.la/incident;
8. **ຕິດຕາມຂໍ້ມູນຂ່າວສານດ້ານຄວາມປອດໄພໄຊເບີ ຢ່າງເປັນປົກກະຕິ:**

ເພື່ອຮັບຮູ້ທັນກົນໄກການຫຼອກລວງຂອງມິດສາຊີບ, ການແຈ້ງເຕືອນ ແລະ ການປ້ອງກັນຢ່າງຖືກຕ້ອງ ສະເໜີໃຫ້ຕິດຕາມຂ່າວສານຜ່ານສື່ທາງການ ຂອງການຈັດຕັ້ງລັດທີ່ກ່ຽວຂ້ອງ, ທະນາຄານ, ບໍລິສັດໂທລະຄົມມະນາຄົມ ແລະ ອິນເຕີເນັດ ຢ່າງເປັນປົກກະຕິ.

❖ **ສອບຖາມຂໍ້ມູນເພີ່ມເຕີມ:**

- ອີເມລ: dtc@ou.gov.la, phoukham@ou.gov.la, kanchanh@ou.gov.la
- ໂທລະສັບ: 081 312 508, 020 29 001 100, 020 28 724 983

ດັ່ງນັ້ນ, ຈິ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ມີສະຕິລະວັງຕົວຕໍ່ການຕົວະຍົວະຫຼອກລວງ ຜ່ານທາງໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕາມແຈ້ງການນີ້ດ້ວຍ.

**ຫົວໜ້າພະແນກ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ພະແນກ ເຕັກໂນໂລຊີ ແລະ ການສື່ສານ
ແຂວງອຸດົມໄຊ

**ນ. ປິ່ນຄຳ ອຸ່ນລະຄອນ**